ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ 2169 /ກປ

ນະຄອນຫຼວງວຽງຈັນ, ວັນທີ 24 OCT 2013

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍການຄຸ້ມຄອງຝຸ່ນໃນ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍກະສິກຳ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 262/ນຍ, ລົງວັນທີ 26 ມິຖຸນາ 2012 ວ່າດ້ວຍ ການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມ ໜັງສືສະເໜີຂອງກົມປູກຝັງ ສະບັບເລກທີ 1522/ກປຝ, ລົງວັນທີ 15 ຕຸລາ 2013.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະຖານ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ກວດກາ ບັນດາກິດຈະການທີ່ກ່ຽວຂ້ອງກັບຝຸ່ນໃນ ສປປ ລາວ ເພື່ອໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ສັນຍາ ແລະສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ ແນໃສ່ປົກປ້ອງຜົນປະໂຫຍດຂອງຜູ້ຊົມໃຊ້, ສຸຂະພາບຂອງຄົນ, ສັດ, ພືດ ແລະປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 2 ການຄຸ້ມຄອງຝຸ່ນ**

ການຄຸ້ມຄອງຝຸ່ນ ແມ່ນການກຳນົດມາດຕະຖານຂອງຝຸ່ນແຕ່ລະປະເພດ ແລະ ຊະນິດ ລວມທັງການຫຸ້ມຫໍ່, ການຕິດສະຫຼາກ, ການໂຄສະນາ, ການນຳໃຊ້, ການຄວບຄຸມ, ການກຳຈັດ ແລະ ການດຳເນີນທຸລະກິດກ່ຽວກັບຝຸ່ນ ໃຫ້ຖືກຕ້ອງຕາມຫຼັກວິຊາການ ແລະລະບຽບກົດໝາຍຂອງ ສປປ ລາວ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 45** ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫລືການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍຕາມລະບຽບ.

**ມາດຕາ 46** ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫລືການຈັດຕັ້ງ ຫາກລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກຍຶດ, ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ແລະລົງໂທດ ຕາມກໍລະນີເບົາ ຫຼືໜັກ ດັ່ງນີ້:

1. ຜູ້ລະເມີດຄັ້ງທີ ໜຶ່ງ: ສຶກສາອົບຮົມ ແລະ ບັນທຶກໄວ້ໃນປຶ້ມຕິດຕາມ;
2. ຜູ້ລະເມີດຄັ້ງທີ ສອງ: ຍຶດສິນຄ້າ ແລະປັບໃໝ 50% ຂອງມູນຄ່າສິນຄ້າຕາມທ້ອງຕະຫລາດ ແລະບັນທຶກໄວ້ໃນປຶ້ມຕິດຕາມ;
3. ຜູ້ລະເມີດຄັ້ງທີ ສາມ: ຍຶດສິນຄ້າ ແລະປັບໃໝສອງເທົ່າຂອງມູນຄ່າສິນຄ້າຕາມທ້ອງຕະຫລາດ, ບັນທຶກໄວ້ໃນປຶ້ມຕິດຕາມ, ສົມທົບ ແລະສະເໜີຂະແໜງການທີ່ກ່ຽວຂ້ອງ ສັ່ງຢຸດເຊົາຊົ່ວຄາວ ຫລື ປິດກິດຈະການຕາມແຕ່ລະກໍລະນີ.

ການລະເມີດ ບໍ່ວ່າຈະເປັນຄັ້ງທີ ໜຶ່ງ, ສອງ ຫຼື ສາມ ກໍຕາມ ຖ້າຫາກສ້າງຜົນກະທົບທີ່ຮ້າຍແຮງຕໍ່ສຸຂະພາບຂອງຄົນ, ສັດ, ພືດ ຫລືສິ່ງແວດລ້ອມ ຕ້ອງຖືກດຳເນີນຄະດີຕາມລະບຽບກົດໝາຍ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 47** ການຈັດຕັ້ງປະຕິບັດ

ມອບໃຫ້ ກົມປູກຝັງ, ກະຊວງກະສິກຳ ແລະປ່າໄມ້ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນ.

**ມາດຕາ 48** ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະໃຊ້ປ່ຽນແທນ ກົດລະບຽບວ່າດ້ວຍການຄຸ້ມຄອງນຳໃຊ້ຝຸ່ນສຳລັບການປູກຝັງ ສະບັບເລກທີ 1503/ກປ.2000, ລົງວັນທີ 29 ພະຈິກ 2000.

ລັດຖະມົນຕີວ່າການ ກະຊວງກະສິກຳ ແລະປ່າໄມ້

ວິໄລວັນ ພົມເຂ